# ຂອງມີຢູ່ໃນຕົວເຮົາ ທັງຝ່າຍດີ ທັງຝ່າຍບໍ່ດີ

1. ຂໍໃຫ້ຄິດວ່າ ເວລາທີ່ເຮົາມາເກີດ ເຮົາມີການເກີດ ເກີດແບບຕາມລຳພັງໃຈບໍ່ໄດ້ ເກີດແບບລອຍໆ ບໍ່ໄດ້ ຕ້ອງເກີດແບບເຮັດຈິງ ເກີດແບບນີ້ຄືເກີດຕາມຄວາມຈິງ ເພາະວ່າການມາເກີດນີ້ ແມ່ນການ ສົ່ງມາ ສົ່ງມາໃຫ້ເກີດ ໃຫ້ເກີດຢູ່ໂລກໜ່ວຍນີ້, ແຕ່ວ່າມີທັງບຸນມີທັງບາບ ຍ້ອນຜູ່ເປັນກາຍໄດ້ຈາກ ພໍ່ຈາກແມ່ ໄດ້ຈາກເຊື້ອແນວແຖວພັນ ໄດ້ຈາກການແບ່ງອອກໃຫ້ກັນ ໄດ້ຈາກການແບ່ງມູນແບ່ງ ມັງໃຫ້ກັນ, ເຊື່ອວ່າຄົງຈະເຂົ້າໃຈໃນເລື່ອງນີ້ ເພາະມີການຮູ້ທາງກັມມະພັນກັນຢູ່ ກັມມະພັນນີ້ ແຕ່ງ ໃຫ້ກັນເກີດ ແຕ່ວ່າການເກີດຂອງພຣະ ແມ່ນເກີດຕາມການຈັດແຖວຂອງພຣະ ແລະມີການ ບອກ ສອນຢ່າງດີພ້ອມ.

2. ຂອງມີຢູ່ໃນໂຕຂອງເຮົາ ກໍຄືຝ່າຍນຶ່ງຝ່າຍພຣະ ຝ່າຍນຶ່ງອີກຝ່າຍມານກໍແມ່ນ ເພາະວ່າມີການຫຼອກ ລວງກັນຢູ່ຕະຫຼອດ ຫຼອກນ້ອຍຫຼອກໃຫຍ່ ກໍຄືເລື່ອງຮັກເລື່ອງມັກ ເລື່ອງດີໃຈເສັຍໃຈ ພໍໃຈບໍ່ພໍໃຈ ເຮັດໃຫ້ກັນ ເວົ້າໃຫ້ກັນ ຈົ່ມວ່າດ່າປ້ອຍ ຫົນຄຽດຊັງ ໂມໂຫໂທສາໃສ່ກັນ ພ້ອມດ້ວຍທະເລາະ ວິ ວາດກັນ ພ້ອມດ້ວຍເຮັດຄວາມຄຽດແຄ້ນໃສ່ກັນ ແລ້ວກໍສ້າງເລື່ອງສ້າງບັນຫາໃສ່ກັນ ສ້າງແລ້ວ ສ້າງອີກ ຈົນວ່າຝ່າຍນຶ່ງຍອມບໍ່ໄດ້ ນີ້ຄືມານທັງເປັນ ມານເໜີດໂຕ ມານທາງກາຍ ມານທາງໃຈ ມານເປັນໂຕໃຫຍ່ ເປັນໂຕນ້ອຍ ມານແບບນີ້ເອີ້ນວ່າ **"ມານຍັງເປັນ"** ມານເປັນໆ ບໍ່ແມ່ນມານຕາຍ ແລ້ວ ສ່ວນມານຕາຍຄືອີກພວກນຶ່ງ ພວກບໍ່ມີກາຍອາສັຍ ພວກຮ່າງກາຍໃຈຂາດແລ້ວ.

3. ເຮັດແນວໃດ ເຮົາຊິເຂົ້າໃຈໄດ້? ຕ້ອງຮູ້ໃຫ້ໄດ້! ຖ້າບໍ່ຮູ້ ເຮົາກໍຈະເສັຍຊາດເກີດ ເພາະວ່າເຮົາເອງ ກໍເປັນມານຄືກັນ ມານຢູ່ກາຍ ຢູ່ໃຈ ຢູ່ຕາ ຫູ ດັງ ລີ້ນ ກາຍ ໃຈນີ້ເອງ ຢູ່ແບບວ່າ ຄອຍຢຸບເອົາ ເລື່ອງນັ້ນເລື່ອງນີ້ເຂົ້າມາ ເລື່ອງແບບນັ້ນ ເລື່ອງແບບນີ້, ອັນນີ້ແລ້ວ ຈຶ່ງໄດ້ເອີ້ນວ່າ **"ຂອງຫຼອກ"** ເຮົາຫຼອກເຮົາ ເຮົາຫຼອກເຂົາ ເຂົາກໍຫຼອກເຮົາ ທັງເຮົາທັງເຂົາ ເຂົ້າໄປຫຼອກກັນ ເຮົາຫຼອກເຂົາ ເຮົາ ກໍບໍ່ຈັກ ເຂົາຫຼອກເຮົາ ເຮົາກໍບໍ່ຈັກ ເຮົາຫຼອກເຮົາ ເຮົາກໍບໍ່ຈັກ ຍ້ອນວ່າບໍ່ຈັກນີ້ແລ້ວ ເຮົາຈຶ່ງພໍໃຈ ແຕ່ທາງພາວະຮ່າງກາຍທາດຂັນທ໌, ສອງຢ່າງນີ້ແລ້ວເປັນໂຕຫຼອກເຮົາ ຫຼອກທັງເຂົາໄປພ້ອມໆ ກັນ

4. ຄິດເບິ່ງ! ຄິດວ່າເປັນແນວໃດ? ຖ້າຄິດໄດ້ ກໍຈະພໍໄດ້ວິຊາຄຸ້ມກັນເຈົ້າຂອງ ແລະຈະພໍໄດ້ແກ້ວມະນີ ໂຊກ! ແກ້ວອັນນີ້ ແກ້ວເວົ້ານຳຄົນໄດ້ ແກ້ວປາກໄດ້ ແກ້ວເວົ້າໄດ້ ແກ້ວເວົ້າຢູ່ໃນ! ແກ້ວເສີຍໆ ມິດ ກໍໄດ້ ເວົ້າກໍໄດ້ ຢາກໃຫ້ມິດກໍມິດ ຢາກໃຫ້ປາກກໍປາກນຳກັນ ກໍຄືຜູ່ທີ່ມີປາກ ຄືຜູ່ເປັນກາຍປາກໃສ່ ປາກວ່າແນວນັ້ນ ປາກວ່າແນວນີ້ ຜູ່ເປັນແກ້ວກໍຈຶ່ງໄດ້ຕອບ ຕອບຕາມລະບົບ ຕອບຕາມລະບຽບ ຕອບແບບນອບນ້ອມຖ່ອມຕົວອ່ອນໂຍນ ເພາະວ່າມາເປັນຂີ້ຂ້າກາຍກ່ອນ ເພາະວ່າເກີດນຳກາຍ ກໍ ຕ້ອງໄດ້ເຄົາລົບກາຍ ຕ້ອງໄດ້ນອບນ້ອມໃສ່ກາຍຢູ່ຕະຫຼອດ ຕ້ອງໄດ້ຂໍຄວາມເມຕຕານຳຜູ່ເປັນກາຍ ຂໍແລ້ວຂໍອີກ ຂໍເລື້ອຍໆ ຍ້ອນວ່າບໍ່ມີອິດສະຫຼະ ຕ້ອງໄດ້ຂໍວ່າ: "ຜູ່ເປັນກາຍເອີຍ! ຂໍໃຫ້ຜູ່ເປັນກາຍ ຢຸດກ່ອນ ການສົ່ງຄຳສອນນີ້ ເພາະວ່າມັນບໍ່ຖືກ ຍັງມີຂໍ້ຜິດພາດ ຄຳສອນນີ້ກໍຄືກັນ ສົ່ງທຳອິດກໍໄດ້

ເລື້ອງຢູ່ ແຕ່ຕໍ່ມາກໍບັງອພ້ອຍນຶ່ງ ແຕ່ບໍ່ເຖິງວ່າຜິດເອົາແທ້ເອົາວ່າ ພໍແຕ່ວ່າເຮັດໃຫ້ຜູ້ອ່ານ ຜູ້ໄດ້ຍິນໄດ້ຟັງ ຍາກຈະເຂົ້າໃຈໄດ້ ພໍແລ້ວແມ່ພຣະ" ບາງເທື່ອກໍຈົບໄດ້ເວົ້າແບບນີ້ ແຕ່ບາງເທື່ອກໍຕ້ອງໄດ້ວ່າ: "ເອົາໄດ້ຢູ່ ແຕ່ວ່າບໍ່ຄັກປານໃດ"

5. ອັນນີ້ຄືການອະທິບາຍໃຫ້ຟັງ ຍ້ານທາຍາຕບໍ່ເຂົ້າໃຈ ຍ້ານທາຍາຕຄິດວ່າ "ພຣະອີສັງ ຄືເວົ້າຖືກແນ່ ບໍ່ຖືກແນ່ ບາງສັບບາງຄວາມເວົ້າ!" ຍ້ານແບບນີ້ດອກ ກໍເລີຍໄດ້ອະທິບາຍໃຫ້ຟັງ ເພື່ອບໍ່ໃຫ້ເຂົ້າໃຈແບບໄຂວ່ເຂວ. ນີ້ຄືຄຳສອນຂອງແມ່ພຣະ ຍາກທີ່ຈະຈັດຈ້ອນໄດ້ ເພາະວ່າແມ່ພຣະເປັນແມ່ຍິງ ເປັນແມ່ອອກ ແລ້ວກໍເປັນລູກຊາວບ້ານທຳມະດາ ລູກພໍ່ໄຮ່ພໍ່ນາ ລູກຜູ້ບໍ່ມີຍົດຖາບັນດາສັກບໍ່ມີຊັ້ນ ບໍ່ມີຕຳແໜ່ງ.

6. ເລື້ອງທັງໝົດນີ້ເປັນເລື້ອງທີ່ເວົ້າຍາກ ແລະກໍເວົ້າບໍ່ຖືກ ເພາະວ່າໃນບາງສິ່ງບາງຢ່າງ ມັນເປັນຄືຄວາມເວົ້າ ແຕ່ບໍ່ແມ່ນຄວາມເວົ້າ ມັນເປັນຂໍ້ມູນ ແຕ່ພັດບໍ່ແມ່ນຂໍ້ມູນຄືທາງໂລກ ແຕ່ເປັນຂໍ້ເປັນຂໍ້ອອກມາໃຫ້ ເວົ້າແບບນີ້ກໍເວົ້າເປັນຂໍ້ເປັນຂໍ້, ການອະທິບາຍນີ້ ກໍຍັງອະທິບາຍແບບພຣະແກ້ວເອງແຕ່ວ່າແບບຄົນແນ່ ຟັງຈັ່ງນຶ່ງກໍຄືຄົນເວົ້າເອົາ ກໍຄືພຣະແມ່ແກ້ວທາງນອກເປັນຜູ້ເວົ້າ, ແຕ່ຄວາມເປັນຈິງ ແມ່ນພຣະທັມເປັນຜູ້ເວົ້າ ເວົ້າໃຫ້ຟັງ ແຕ່ວ່າກໍຕ້ອງໄດ້ອາສັຍແມ່ພຣະທາງນອກ ຜູ້ເປັນຮ່າງກາຍນີ້ແລ້ວຊ່ວຍກັນ, ແຕ່ຖ້າແມ່ນວ່າບໍ່ມີພຣະເກີດຂຶ້ນມາຢູ່ໃນຫົວໃຈ ກໍບໍ່ສາມາດເວົ້າອອກມາແບບນີ້ໄດ້ ເພາະວ່າເວົ້າໃຫ້ຜູ້ນຶ່ງຟັງ ແລ້ວກໍນັ່ງຈົດເອົາ ຄືແບບນີ້ ເປັນໜັງສືຈົດ ເປັນໜັງສືຄົນນຶ່ງຈົດ ຄົນນຶ່ງສົ່ງອອກໃຫ້ຈົດ ແລ້ວກໍເປັນຕົນເປັນໂຕອອກມາແບບນີ້! ຊີວິດຂອງຜູ້ຢູ່ໃນກໍເປັນແບບນີ້ແລ້ວ ເປັນຕົນໂຕຕາມຄວາມຮູ້ສຶກຂອງຄົນ ບໍ່ແມ່ນເປັນຕົວຕົນແທ້ ພຽງແຕ່ໃຫ້ຂໍ້ມູນອອກມາໄດ້

7. ເປັນເລື້ອງແບບນີ້ ເປັນເລື້ອງແບບເວົ້າຍາກ ແຕ່ກໍພໍເຂົ້າໃຈນຳກັນໄດ້ ຂໍໃຫ້ທຸກຕົນທຸກຄົນ ທີ່ເຄີຍໄດ້ຍິນໄດ້ຟັງ ທີ່ເຄີຍໄດ້ອ່ານ ຈົ່ງເອົາການພິນິດພິຈາລະນາລົງຫຼາຍໆ ລົງໃສ່ ເພື່ອໃຫ້ເຫັນໃຫ້ຮູ້ແຈ້ງດ້ວຍຕົນເອງ ຢ່າອ່ານແບບຜິວເຜີນ! ຢ່າຟັງແລ້ວເອົາໄປໂສກັນໂລດ! ຂໍໃຫ້ເຂົ້າໃຈວ່າ ໜັງສືຂອງພຣະ! ພຣະແທ້ໆ ພຣະຈິງໆ!

8. ຂໍໃຫ້ເຫັນວ່າໜັງສືນີ້ ມີມູນເຫດມາຈາກພຣະຢູ່ໃນ ບໍ່ແມ່ນຄົນທາງນອກເປັນຜູ້ແຕ່ງເອົາ ແລະບໍ່ແມ່ນຜູ້ຂຽນເປັນຜູ້ແຕ່ງ ມີແຕ່ພຣະເປັນຜູ້ສົ່ງໃຫ້ ແຕ່ວ່າພຣະອົງຄ໌ທີ່ເກີດຢູ່ໃນຫົວໃຈ, ສະຫຼຸບແລ້ວແມ່ນຄວາມຈິງ ເປັນໄປຕາມຄວາມຈິງ ເພາະວ່າຄວາມຈິງພາເກີດ ເກີດມີ ເກີດເປັນ ເກີດໄດ້ ເກີດເວົ້າໄດ້ ປາກໄດ້ ເວົ້າແບບນີ້ແລ້ວເວົ້າກັບພໍ່ແມ່ ມວນມະນຸດທັງຫຼາຍ ເວົ້າແບບເວົ້າອອກມາ ໃຫ້ຟັງນີ້ແລ້ວ ເວົ້າແບບວ່າມີພຣະຢູ່ໃນບອກສອນ ບອກໃຫ້ຮູ້ ໃຫ້ຮູ້ນັ້ນ ໃຫ້ຮູ້ນີ້ຕາມຄວາມຈິງ ເປັນແບບນີ້ຈິງໆ!

9. ຢາກບອກວ່າ ຊີວິດຂອງເຮົາ ຖ້າເຂົ້າໃຈ ເຮົາຈະໄດ້ສິ່ງນີ້ແລ້ວ ມາເປັນທີ່ເພິ່ງ ມາເປັນຜູ່ຮັກສາເຮົາ ມາເປັນຜູ່ຄອຍຊ່ວຍເຫຼືອເຮົາ ຊາມເຮົາໃຈຂາດ, ບາດເຮົາຂາດໃຈໄປແລ້ວ ກໍສິ່ງນີ້ແລ້ວ ຈະພາວິນ ຍານເຮົາໄປ.

**ຢາກໄດ້ບໍ່ ທາຍາຕພຣະພຸທທະສາສນາທັງຫຼາຍ ຢາກໄດ້ນຳກັນບໍ່ ແກ້ວມະນີໂຊກ? ເອີ້ນວ່າແກ້ວ ມະນີໂຊກສ່ະ ເພາະວ່າໃຜໄດ້ຖືວ່າໂຊກດີ!**

ວັນທີ **15/12/2015**, ເວລາ **10:50-11-55** ໂມງ,

ໃຊ້ເວລາສົ່ງສັຈຈະທັມອອກ ແລະຈົດໄວ້ **01** ຊົ່ວໂມງ **05** ນາທີ

**ຜູ່ຮັບຈົດ ແລະຕີພິມໄວ້ ດຣ. ມະນີສົດ ແກ້ວດາລາ**

ໂທລະສັບ:**(+856-20) 2222 8489,** E-mail: manisothk@gmail.com;